- ເອກະສານຂໍ້ມູນຕົວຈິງທາງອິນເຕີເນັດ ແລະ ເຕັກໂນໂລຊີໂດຍ ECPAT –

# ທີ່ຢູ່ຄອມພິວເຕີແມ່ນຫຍັງ?

## ແລະ ວິທີທີ່ທີ່ຢູ່ຄອມພິວເຕີຖືກນຳໃຊ້ສຳລັບການລະບຸຕົວ ຜູ້ລະເມີດທາງເພດເດັກທາງອິນເຕີເນັດ

### ຂໍ້ມູນຕົວຈິງ

- IP ແມ່ນຫຍໍ້ມາຈາກທີ່ຢູ່ຄອມພິວເຕີ (Internet Protocol).
- ທີ່ຢູ່ຄອມພິວເຕີແມ່ນພາສາດ້ານເຕັກນິກ ທີ່ເຮັດໃຫ້ອຸປະກອນສອງອັນສາມາດຕິດຕໍ່ສື່ສານກັນໄດ້ໂດຍໃຊ້ອິນເຕີເນັດ.
- ທີ່ຢູ່ຄອມພິວເຕີອາດຈະ 'ຄົງທີ່' [ບໍ່ມີການປ່ຽນແປງ] ຫຼື 'ມີການເຄື່ອນໄຫວຢູ່ຕະຫຼອດເວລາ' [ຊົ່ວຄາວ].

## ທີ່ຢູ່ຄອມພິວເຕີນັ້ນນຳໃຊ້ແນວໃດ?

ທີ່ຢູ່ຄອມພິວເຕີແມ່ນສິ່ງທີ່ໃຊ້ລະບຸ ຫຼື ລາຍເຊັນສະເພາະຂອງອຸປະກອນໃດໜຶ່ງ ເຊິ່ງເຮັດໃຫ້ສາມາດລະບຸ, ຫາຕຳແໜ່ງ ແລະ ໃຫ້ເຫັນຄວາມແຕກຕ່າງຂອງອຸປະກອນດັ່ງກ່າວກັບອຸປະກອນອື່ນທີ່ເຊື່ອມຕໍ່ກັບອິນເຕີເນັດໄດ້. ອຸປະກອນທຸກອັນຈະມາພ້ອມກັບທີ່ຢູ່ທີ່ຈະລະບຸຄອມພິວເຕີ, ໂທລະທັດ, ເກມ ຫຼື ອຸປະກອນອື່ນໆ.

ທີ່ຢູ່ຄອມພິວເຕີແມ່ນອະນຸຍາດສຳລັບການຕິດຕໍ່ສື່ສານລະຫວ່າງອຸປະກອນຕ່າງໆ. ວິທີດຽວກັນກັບບຸກຄົນໃດໜຶ່ງຕ້ອງມີທີ່ຢູ່ ເພື່ອໃຫ້ສາມາດສົ່ງຈົດໝາຍໄດ້, ຄອມພິວເຕີຕ້ອງມີທີ່ຢູ່ຂອງຄອມພິວເຕີໜ່ວຍອື່ນເພື່ອທີ່ຈະສາມາດຕິດຕໍ່ສື່ສານກັບຄອມພິວເຕີໜ່ວຍນັ້ນໄດ້. ດັ່ງນັ້ນ ທີ່ຢູ່ຄອມພິວເຕີເຮັດໃຫ້ຜູ້ໃຊ້ສາມາດສົ່ງ ແລະ ກູ້ຂໍ້ມູນຄືນ ແລະ ຮັບປະກັນວ່າການຕິດຕໍ່ສື່ສານ ແລະ ຂໍ້ມູນຈະໄປເຖິງຈຸດໝາຍປາຍທາງທີ່ຖືກຕ້ອງໄດ້. ທີ່ຢູ່ຄອມພິວເຕີຈະເປີດເຜີຍຂໍ້ມູນເປັນຕົ້ນແມ່ນສະຖານທີ່ໆອຸປະກອນດັ່ງກ່າວຕັ້ງຢູ່ ແລະ ຊື່ຂອງຜູ້ໃຫ້ບໍລິການອິນເຕີເນັດ. ທີ່ຢູ່ຄອມພິວເຕີດັ່ງກ່າວແມ່ນສິ່ງທີ່ເປັນສາກົນ ແລະ ທຸກອຸປະກອນ ຫຼື ສະຖານທີ່ຕັ້ງເຮັດວຽກແບບດຽວກັນ.

## ຮູບແບບທີ່ຢູ່ຄອມພິວເຕີ

ທີ່ຢູ່ຄອມພິວເຕີປະກອບດ້ວຍຕົວເລກ ແລະ ຈໍ້າເມັດ. ຕົວເລກຂອງທີ່ຢູ່ຄອມພິວເຕີທີ່ສາມາດນຳໃຊ້ໄດ້ແມ່ນເລີ່ມທີ່ຈະຂະຫຍາຍຕົວເປັນ IP ຮູບແບບໃໝ່ - IP ຮູບແບບ 6 ຫຼື IPv6 - ທີ່ຖືກນຳໃຊ້ຢ່າງກວ້າງຂວາງ.




## ການນຳໃຊ້ທີ່ຢູ່ຄອມພິວເຕີສຳລັບຈຸດປະສົງໃນການລະບຸຕົວຕົນ

ເມື່ອຜູ້ລະເມີດທາງເພດເດັກເຊື່ອມຕໍ່ກັບອິນເຕີເນັດ ພວກເຂົານຳໃຊ້ອຸປະກອນທີ່ມີທີ່ຢູ່ຄອມພິວເຕີ. ເຊິ່ງທີ່ຢູ່ຄອມພິວເຕີດັ່ງກ່າວຈະເຫຼືອຮ່ອງຮອຍການເຄື່ອນໄຫວໃນອິນເຕີເນັດ. ເຊິ່ງທີ່ຢູ່ຄອມພິວເຕີເຮັດໃຫ້ເຈົ້າໜ້າທີ່ມີໂອກາດໃນການຕິດຕາມອຸປະກອນ ແລະ ສາມາດບອກເວລາ ແລະ ສະຖານທີ່ໆອຸປະກອນດັ່ງກ່າວຖືກນຳໃຊ້. ນັ້ນໝາຍຄວາມວ່າເຈົ້າໜ້າທີ່ສາມາດລະບຸບຸກຄົນກະທຳຜິດທີ່ນຳໃຊ້ອຸປະກອນດັ່ງກ່າວໄດ້.

ນອກຈາກນັ້ນ ເຈົ້າໜ້າທີ່ຍັງສາມາດເຮັດວຽກຮ່ວມກັບຜູ້ໃຫ້ບໍລິການອິນເຕີເນັດ ເພື່ອເຂົ້າເຖິງຂໍ້ມູນຄອມພິວເຕີດັ່ງກ່າວ (ຊົ່ວຄາວ) ທີ່ມີການບັນທຶກການເຂົ້າເຖິງຄອມພິວເຕີທີ່ມີທີ່ຢູ່ ແລະ ການເຄື່ອນໄຫວຂອງທີ່ຢູ່ຄອມພິວເຕີດັ່ງກ່າວໃນເຊີບເວີຂອງພວກເຂົາເພື່ອຈຸດປະສົງໃນການລະບຸຕົວຕົນຂອງຜູ້ຊົມໃຊ້ໄດ້.

ແຕ່ໃນທາງກັບກັນຜູ້ລະເມີດກໍ່ສາມາດນຳໃຊ້ມາດຕະການຕ່າງໆເພື່ອປົກປິດທີ່ຢູ່ຄອມພິວເຕີຂອງພວກເຂົາ. ວິທີການໜຶ່ງທີ່ຖືກນຳໃຊ້ແມ່ນ "ເຊີບເວີຕົວແທນ". ແທນທີ່ຈະເຂົ້າເຖິງເວັບໄຊໃດໜຶ່ງໂດຍກົງ, ຄຳຂໍຂອງຜູ້ລະເມີດຈະຫັນປ່ຽນຊ່ອງທາງໂດຍຜ່ານເຊີບເວີຕົວແທນທີ່ບໍ່ບັນທຶກທີ່ຢູ່ຂອງອຸປະກອນທີ່ຍື່ນຄຳຂໍ. ການດຳເນີນການນີ້ໄດ້ຍົກລະດັບຄວາມບໍ່ມີຕົວຕົນຂອງຜູ້ລະເມີດ. ອີກໜຶ່ງຕົວຢ່າງແມ່ນການນຳໃຊ້ວິທີການທີ່ເອີ້ນວ່າ "ທີ່ຢູ່ຄອມພິວເຕີປອມ" ເພື່ອປົກປິດທີ່ຢູ່ຄອມພິວເຕີຕົວຈິງ ແລະ ນຳສະເໜີທີ່ຢູ່ຄອມພິວເຕີອື່ນທີ່ບໍ່ຖືກຕ້ອງ ເພື່ອຈຸດປະສົງໃນການກະທຳຜິດກົດໝາຍ.

ນອກນັ້ນຍັງມີເຄື່ອງມືອື່ນໆ ແລະ ການບໍລິການອິນເຕີເນັດ ເຊິ່ງເຮັດໃຫ້ການຄົ້ນຫາທີ່ຢູ່ຄອມພິວເຕີຂອງບຸກຄົນໃດໜຶ່ງເປັນສິ່ງທີ່ຫຍຸ້ງຍາກ ແລະ ໃຊ້ເວລາຢ່າງຫຼວງຫຼາຍ.

ເອກະສານຂໍ້ມູນຕົວຈິງສະບັບນີ້ໄດ້ຮັບການພັດທະນາໂດຍອົງການ ECPAT ສາກົນ. ສະໜັບສະໜູນການແປພາສາ ແລະ ການຜະລິດໂດຍອົງການສປຊ ສຳລັບເດັກ

ecpat
unicef
unite for children